ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 136 /ອຫ.

ວັນທີ 02 APR 2002

# ແຈ້ງການ

***ເຖິງ:*** ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໄຊສົມບູນ.

***ເລື່ອງ:*** ມາດຕະຖານ ແລະ ເງື່ອນໄຂ ຂອງໂຮງງານປະກອບລົດ.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ຫັດຖະກຳ ວ່າດ້ວຍໂຮງງານ ເລກທີ 103/ອຫ, ເລກທີ 107/ອຫ, ລົງວັນທີ 21/2/1992
- ອີງຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ ວ່າດ້ວຍການກຳນົດມາດຕະຖານການປະກອບລົດຈັກ ແລະ ການນຳເຂົ້າສິ້ນສ່ວນ-ອາໄຫຼ່ລົດຈັກ 2 ລໍ້ ເພື່ອປະກອບຢູ່ໂຮງງານ ເລກທີ 062/ອຫ, ລົງວັນທີ 01/03/1999 ແລະ ແຈ້ງການວ່າດ້ວຍການນຳເຂົ້າສິ້ນສ່ວນ-ອາໄຫຼ່ລົດມືສອງຈາກຕ່າງປະເທດມາປະກອບຄືນໃໝ່ ແລະ ມາດຕະຖານການປະກອບລົດມືສອງຢູ່ໃນໂຮງງານ ເລກທີ 152/ອກ, ລົງວັນທີ 10/5/1999.

ອີງຕາມການຕົກລົງເປັນເອກະພາບ ຂອງປະຊຸມວິຊາການຢູ່ທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຄັ້ງວັນທີ 19/03/2002.

ເພື່ອຮັບປະກັນມາດຕະຖານເຕັກນິກ ການຜະລິດ/ປະກອບ ແລະ ສ້າງຕະລິດຕະພັນໃຫ້ມີຄຸນນະພາບ, ຮັບປະກັນເງື່ອນໄຂການອອກແຮງງານຂອງຄົນງານໃຫ້ມີຄວາມປອດໄພ, ແລະ ຫຼີກລ້ຽງການກໍ່ເຫດລຳຄານ ຊຶ່ງຈະນຳຜົນກະທົບຕໍ່ສິ່ງແວດລ້ອມ, ຜູ້ຢູ່ໃກ້ຄຽງ ແລະ ສາທາລະນະຊົນ ແນໃສ່ຊຸກຍູ້ໃຫ້ມີການຜະລິດສິ້ນສ່ວນພາຍໃນ ຫຼຸດຜ່ອນການນຳເຂົ້າສິ້ນສ່ວນເທື່ອລະກ້າວ ເພື່ອສ້າງພື້ນຖານອຸດສາຫະກຳດ້ານການຜະລິດ ແລະ ປະກອບ ເລີ້ມແຕ່ນ້ອຍຫາໃຫຍ່ ໂດຍດຳເນີນກິດຈະການໂຮງງານຖືກຕ້ອງ ຕາມລະບຽບການ ແລະ ສອດຄ່ອງກັບລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ຂໍແຈ້ງມາຍັງ ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດໄຊສົມບູນ ຊາບຕໍ່ກັບມາດຕະຖານ ແລະເງື່ອນໄຂຂອງໂຮງງານປະກອບລົດ, ການອອກອະນຸຍາດ ແລະການນຳເຂົ້າສິ້ນສ່ວນເພື່ອມາປະກອບຢູ່ໃນໂຮງງານ ຄືດັ່ງນີ້:

1/. ໂຮງງານຜະລິດ/ປະກອບລົດ ຕ້ອງໄດ້ຮັບໃບອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານຈາກກະຊວງອຸດສາຫະກຳ ແລະ ຫັດຖະກຳ ( ກົມອຸດສາຫະກຳ ) ໂດຍປະກອບຄຳຮ້ອງຂໍຜ່ານພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ແລ້ວສົ່ງໃຫ້ກະຊວງອຸດສາຫະກຳ ແລະ

ຫັດຖະກຳ ເພື່ອພິຈາລະນາອອກອະນຸຍາດຕາມຂໍ້ຕົກລົງວ່າດ້ວຍໂຮງງານ. ພ້ອມດຽວກັນນີ້ ໂຮງງານຕ້ອງປະຕິບັດຕາມລະບຽບກົດໝາຍຂອງຂະແໜງການອື່ນທີ່ກ່ຽວຂ້ອງ ຄົບຖ້ວນ ແລະ ຖືກຕ້ອງທຸກປະການ.

2/. ໂຮງງານຜະລິດ/ປະກອບລົດ ຕ້ອງມີມາດຕະຖານຂອງໂຮງງານຢ່າງເໝາະສົມ ໂດຍປະຕິບັດຕາມຂໍ້ຕົກລົງວ່າດ້ວຍ ໂຮງງານ ເລກທີ 103/ອຫ, 107/ອຫ, ລົງວັນທີ 21/02/92, ແຈ້ງການຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ ເລກທີ 062/ອຫ, ລົງວັນທີ 1/3/99 ກ່ຽວກັບມາດຕະຖານການນຳເຂົ້າສິ້ນສ່ວນລົດສອງລໍ້ ເພື່ອມາປະກອບຢູ່ໂຮງງານ ແລະ ແຈ້ງການເລກທີ 152/ອຫ, ລົງວັນທີ 10/5/99 ກ່ຽວກັບມາດຕະຖານການນຳເຂົ້າສິ້ນສ່ວນລົດໃຫຍ່ ເຂົ້າມາປະກອບຢູ່ໂຮງງານ ລະອຽດດັ່ງນີ້ :

ກ. ມາດຕະຖານໂຮງງານປະກອບລົດຈັກ ( ລົດ 2 ລໍ້ ).

1). ສະຖານທີ່ຕັ້ງໂຮງງານ:

ໂຮງງານຜະລິດ/ປະກອບລົດ ຕ້ອງຕັ້ງຢູ່ສະຖານທີ່ກວ້າງຂວາງມີບໍລິເວນພຽງພໍ ແລະ ເໝາະສົມກັບກິດຈະການປະກອບລົດຈັກ, ມີລະບົບໄຟຟ້າ, ລະບົບນ້ຳໃຊ້ ແລະ ການຂົນສົ່ງສະດວກສະບາຍ ບໍ່ກີດຂວາງການສັນຈອນໄປມາ ແລະ ບໍ່ໃຫ້ເປັນອັນຕະລາຍ ຮັບປະກັນຄວາມປອດໄພ ຫຼືກໍ່ຄວາມລຳຄານໃຫ້ແກ່ຜູ້ອື່ນ ພ້ອມນີ້ ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກຂະແໜງ ຄ.ຂ.ປ.ກ.

2). ອາຄານຜະລິດ/ປະກອບ

1- ອາຄານຜະລິດ/ປະກອບລົດ ຕ້ອງມີໂຄງລ້າງແໜ້ນໜາແຂງແຮງ ໂດຍໃຫ້ຖືກຕ້ອງຕາມການຄຳນວນອອກແບບ ແລະ ໄດ້ຮັບການຢັ້ງຢືນດ້ານເຕັກນິກອາຄານໂຮງງານ ຈາກວິສາວະກອນວິຊາສະເພາະ ຫຼືວິສາວະກອນອື່ນໆທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຮັບຮູ້ ແລະ ໂດຍຖືກຕ້ອງຕາມລະບຽບການປຸກສ້າງ ຂອງຂະແໜງ ຄ.ຂ.ປ.ກ.

2- ມີຊ່ອງລະບາຍຖ່າຍເທອາກາດຢ່າງພຽງພໍ, ບໍ່ແອອັດ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

3- ຕ້ອງຕິດຕັ້ງລະບົບເຄື່ອງປ້ອງກັນອັກຄີໄພ.

4- ພາຍໃນອາຄານຕ້ອງຈັດໃຫ້ມີຫ້ອງການບໍລິຫານ, ລະບົບສາງເກັບສິ້ນສ່ວນອາໄຫລ່ ແລະ ຜະລິດຕະພັນທີ່ປະກອບແລ້ວ.

5- ຕ້ອງຈັດໃຫ້ມີລະບົບ ຫຼືວິທີການກຳຈັດສິ່ງເສດເຫຼືອ ຈາກໂຮງງານ( ເສດເຫຼັກ, ນ້ຳມັນ, ນ້ຳສີ, ນ້ຳເສັຍຄຸນ...)ຖ້າມີ.

3). ເຄື່ອງຈັກ ແລະ ຂັ້ນຕອນການປະກອບ:

1- ຕ້ອງຕິດຕັ້ງເຄື່ອງຈັກຜະລິດ/ປະກອບ ໃຫ້ເປັນລະບົບຕ່ອງໂສ້ ( ຕ່ອງໂສ້ແບບອັດຕະໂນມັດ ) ໂດຍມີການຈັດຕັ້ງແບ່ງງານກັນໃນຂອດການຜະລິດ/ປະກອບແຕ່ລະຂອດງານຂອງສິ້ນສ່ວນ.

2- ຕ້ອງຕິດຕັ້ງລະບົບປ້ຳລົມ, ລະບົບກະແຈຄົບຊຸດ (ກະແຈປາກ, ບ້ອງ, ບັອກ...) ທີ່ນຳໃຊ້ດ້ວຍລະບົບລົມ ແລະ ເຄື່ອງມືອຸປະກອນອື່ນໆ (ທັນສະໄໝຍິ່ງເປັນການດີ).

4). ການກວດກາຄຸນນະພາບລົດ:

ໂຮງງານຜະລິດ/ປະກອບລົດ ຕ້ອງມີເຄື່ອງມືອຸປະກອນກວດກາຄຸນນະພາບລົດ ເຊັ່ນ:

1- ເຄື່ອງຕັ້ງສູນລໍ້, ຖ່ວງລໍ້.

2- ເຄື່ອງກວດກາລະບົບຫ້າມລໍ້.

3- ເຄື່ອງກວດກາລະບົບຄວາມໄວ, ລະບົບບັນຊາ.

4- ເຄື່ອງກວດກາລະບົບໄຟ, ແສງສະຫວ່າງ...

5). ຖ້າເປັນໂຮງງານທີ່ຜະລິດສິ້ນສ່ວນ ຕ້ອງມີເຄື່ອງຈັກ ເຄື່ອງມືອຸປະກອນຄົບຊຸດ, ເຄື່ອງຈອດໄຟຟ້າ, ຈອດອົກຊີ, ຫ້ອງພົ່ນສີ ແລະ ອົບສີ ທີ່ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະສາທາລະນະຊົນ; ຕ້ອງມີໃບຢັ້ງຢືນຮັບຮອງດ້ານມາດຕະຖານ ແລະ ຄຸນນະພາບຂອງສິ້ນສ່ວນທີ່ຜະລິດ ຈາກກະຊວງອຸດສາຫະກຳ ແລະ ຫັດຖະກຳ ຫຼືອົງການມະຫາພາກທີ່ກ່ຽວຂ້ອງ.

6). ຕ້ອງມີວິຊາການເຕັກນິກຊັ້ນສູງ(ກົນຈັກໃດນຶ່ງ) ທີ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງທີ່ຖືກຕ້ອງ ປະຈຳໂຮງງານ ຢ່າງນ້ອຍ 1 ຄົນ ແລະ ຕ້ອງມີເອກະສານເຕັກນິກກ່ຽວກັບການປະກອບ ແລະ ປຶ້ມຄູ່ມືການນຳໃຊ້ລົດ.

7). ຕ້ອງມີຄົນງານທີ່ຊຳນານງານແຕ່ 10 ຄົນຂຶ້ນໄປ.

8). ຕ້ອງມີເຄື່ອງປ້ອງກັນແຮງງານໃຫ້ແກ່ຄົນງານ ເຊັ່ນ: ເຄື່ອງປ້ອງກັນຝຸ່ນ, ແສງ, ສຽງ, ເກີບ, ໝວກ, ສົບມື (ຂຶ້ນກັບຂອດງານທີ່ຈຳເປັນ) ແລະ ຊຸດເຄື່ອງນຸ່ງທີ່ເປັນສັນຍາລັກຂອງໂຮງງານ.

9). ຕ້ອງມີສະຖານທີ່ວາງສະແດງຂາຍ (ໂຊຣູມ) ແລະ ບໍລິການຫຼັງຂາຍ.

10). ຕ້ອງມີໃບຢັ້ງຢືນດ້ານສິດທິບັດ ຫຼືໃບອະນຸຍາດທາງດ້ານລິຂະສິດ ຈາກບໍລິສັດທີ່ເປັນເຈົ້າຂອງຍີ່ຫໍ້ລົດ.

11). ຕ້ອງມີແຜນການປັບປຸງ, ຂະຫຍາຍໂຮງງານ ແລະ ຜະລິດສິ້ນສ່ວນໃດນຶ່ງພາຍໃນປະເທດ ໂດຍກຳນົດເວລາທີ່ຈະຜະລິດຈະແຈ້ງຕາມເງື່ອນໄຂເໝາະສົມ.

12). ຕ້ອງມີທຶນຈົດທະບຽນທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍທຸລະກິດ.

## ຂ. <u>ມາດຕະຖານໂຮງງານປະກອບລົດໃຫຍ່ (ປະເພດລົດ 3ລໍ້ ແລະ 4 ລໍ້ ຂຶ້ນໄປ)</u>

1). <u>ສະຖານທີ່ຕັ້ງໂຮງງານ:</u>

ໂຮງງານຜະລິດ/ປະກອບລົດ (ປະເພດລົດ 3ລໍ້ ແລະ 4 ລໍ້ ຂຶ້ນໄປ) ຕ້ອງຕັ້ງຢູ່ສະຖານທີ່ກວ້າງຂວາງ ມີບໍລິເວນພຽງພໍ ແລະ ເໝາະສົມກັບກິດຈະກຳການປະກອບລົດໃຫຍ່, ມີລະບົບໄຟຟ້າ, ລະບົບນ້ຳໃຊ້ ແລະ ການຂົນສົ່ງສະດວກສະບາຍ ບໍ່ກີດຂວາງການສັນຈອນໄປມາ ແລະ ບໍ່ໃຫ້ເປັນອັນຕະລາຍ, ຮັບປະກັນຄວາມປອດໄພ ຫຼືກໍ່ຄວາມລຳຄານໃຫ້ແກ່ຜູ້ອື່ນ ພ້ອມນີ້ ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກຂະແໜງ ຄ.ຂ.ປ.ກ.

2). <u>ອາຄານຜະລິດ/ປະກອບ</u>

1- ອາຄານຜະລິດ/ປະກອບລົດ (ປະເພດລົດ 3ລໍ້ ແລະ 4 ລໍ້ ຂຶ້ນໄປ) ຕ້ອງມີໂຄງສ້າງແໜ້ນໜາແຂງແຮງ ໂດຍໃຫ້ຖືກຕ້ອງຕາມການຄຳນວນອອກແບບ ແລະ ໄດ້ຮັບການຢັ້ງຢືນດ້ານເຕັກນິກອາຄານໂຮງງານ ຈາກວິສາວະກອນວິຊາສະເພາະ ຫຼືວິສາວະກອນອື່ນໆທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຮັບຮູ້ ແລະ ໂດຍຖືກຕ້ອງຕາມລະບຽບການປຸກສ້າງ ຂອງຂະແໜງ ຄ.ຂ.ປ.ກ.

2- ມີຊ່ອງລະບາຍຖ່າຍເທອາກາດຢ່າງພຽງພໍ, ບໍ່ແອອັດ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

3- ຕ້ອງຕິດຕັ້ງລະບົບເຄື່ອງປ້ອງກັນອັກຄີໄພ.

4- ພາຍໃນອາຄານຕ້ອງຈັດໃຫ້ມີຫ້ອງການບໍລິຫານ, ລະບົບສາງເກັບສິ້ນສ່ວນອາໄຫລ່ ແລະ ຜະລິດຕະພັນທີ່ປະກອບແລ້ວ.

5- ຕ້ອງຈັດໃຫ້ມີລະບົບ ຫຼືວິທີການກຳຈັດສິ່ງເສດເຫຼືອ ຈາກໂຮງງານ( ເສດເຫຼັກ, ນ້ຳມັນ, ນ້ຳສີ, ນ້ຳເສັຍຄຸນ...)ຖ້າມີ.

3). <u>ເຄື່ອງຈັກ ແລະ ຂັ້ນຕອນການປະກອບ:</u>

1- ຕ້ອງຕິດຕັ້ງເຄື່ອງຈັກຜະລິດ/ປະກອບ ໃຫ້ເປັນລະບົບຕ່ອງໂສ້ (ຕ່ອງໂສ້ແບບອັດຕະໂນມັດຍິ່ງດີ) ໂດຍມີການຈັດຕັ້ງແບ່ງງານກັນໃນການຜະລິດ/ປະກອບແຕ່ລະຂອດງານຂອງສິ້ນສ່ວນ.

2- ຕ້ອງຕິດຕັ້ງລະບົບບຳລົມ, ລະບົບກະແຈຄົບຊຸດ (ກະແຈປາກ, ບ໋ວງ, ບ໊ອກ...) ທີ່ນຳໃຊ້ດ້ວຍລະບົບລົມ ແລະ ເຄື່ອງມື ອຸປະກອນອື່ນໆ (ທັນສະໄໝຍິ່ງເປັນການດີ).

3- ຕ້ອງຈັດໃຫ້ມີລະບົບເຄື່ອງຍົກຍໍ ຫຼື ເຄື່ອງສິ່ງຄຸ່ງນ ເພື່ອຫຼຸ່ນແຮງ ເຊັ່ນ: Lift, Crane...

4- ຕ້ອງຈັດໃຫ້ມີລະບົບເຄື່ອງຈອດໄຟຟ້າ, ເຄື່ອງຈອດອົກຊີ...

5- ຕ້ອງຈັດໃຫ້ມີເຄື່ອງອຸປະກອນພົ່ນສີ, ຫ້ອງພົ່ນສີ ແລະ ອົບສີ ທີ່ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະສາທາລະນະຊົນ.

4). <u>ການກວດກາຄຸນນະພາບລົດ:</u>

ໂຮງງານຜະລິດ/ປະກອບລົດໃຫຍ່ຕ້ອງມີເຄື່ອງມືອຸປະກອນກວດກາຄຸນນະພາບລົດ ເຊັ່ນ:

1- ເຄື່ອງຕັ້ງສູນລໍ້, ຖ່ວງລໍ້.

2- ເຄື່ອງກວດກາລະບົບຫ້າມລໍ້.

3- ເຄື່ອງວັດແທກລະບົບຄວາມໄວ, ລະບົບບັນຊາ.

4- ເຄື່ອງກວດກາລະບົບໄຟ, ແສງສະຫວ່າງ...

5- ເຄື່ອງກວດກາສະພາບທົ່ວຈັກ, ລະບົບສົ່ງກຳລັງ.

5). ຕ້ອງມີວິຊາການເຕັກນິກຊັ້ນສູງ(ກົນຈັກໃດນຶ່ງ) ທີ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງທີ່ຖືກຕ້ອງ ປະຈຳໂຮງງານ ຢ່າງນ້ອຍ 1 ຄົນ ແລະ ຕ້ອງມີເອກະສານເຕັກນິກກ່ຽວກັບການປະກອບ ແລະ ປື້ມຄູ່ມືການນຳໃຊ້ລົດ.

6). ຕ້ອງມີຄົນງານທີ່ຊຳນານງານແຕ່ 10 ຄົນຂຶ້ນໄປ.

7). ຕ້ອງມີເຄື່ອງປ້ອງກັນແຮງງານ ເຊັ່ນ: ເຄື່ອງປ້ອງກັນຝຸ່ນ, ແສງ, ສຽງ, ເກີບ, ໝວກ, ສົບມື (ຂຶ້ນກັບຂອດງານທີ່ຈຳເປັນ) ແລະ ຊຸດເຄື່ອງນຸ່ງທີ່ເປັນສັນຍາລັກຂອງໂຮງງານ.

8). ຕ້ອງມີສະຖານທີ່ວາງສະແດງຂາຍ (ໂຊຣູມ) ແລະ ບໍລິການຫຼັງຂາຍ.

9). ຕ້ອງມີໃບຢັ້ງຢືນດ້ານສິດທິບັດ ຫຼືໃບອະນຸຍາດທາງດ້ານລິຂະສິດ ຈາກບໍລິສັດທີ່ເປັນເຈົ້າຂອງຍີ່ຫໍ້ (ຖ້າປະກອບລົດໃໝ່ 100%).

10). ຕ້ອງມີແຜນການປັບປຸງ, ຂະຫຍາຍໂຮງງານ ແລະ ຜະລິດສິ້ນສ່ວນພາຍໃນປະເທດ ໂດຍກຳນົດເວລາທີ່ຈະຜະລິດຈະແຈ້ງຕາມເງື່ອນໄຂເໝາະສົມ.

11). ຕ້ອງມີທຶນຈົດທະບຽນທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍທຸລະກິດ.

3/. ສຳລັບໂຮງງານປະກອບລົດທີ່ຂໍສ້າງຕັ້ງໃໝ່ ຕ້ອງປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂຂອງໂຮງງານປະກອບລົດ ຕາມແຈ້ງການສະບັບນີ້ ຈຶ່ງອະນຸຍາດໃຫ້ສ້າງຕັ້ງໄດ້. ສ່ວນໂຮງງານປະກອບລົດທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການມາກ່ອນແລ້ວນັ້ນ ຖ້າຍັງບໍ່ທັນໄດ້ຕາມມາດຕະຖານ ແລະ ເງື່ອນໄຂຂອງໂຮງງານປະກອບລົດ ທີ່ກຳນົດໄວ້ໃນແຈ້ງການສະບັບນີ້ຕ້ອງໄດ້ປັບປຸງຄືນໃຫ້ຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂ ທີ່ວາງໄວ້ທຸກປະການ.

4/. ໃນການສະເໜີຂໍອະນຸຍາດນຳເຂົ້າສິ້ນສ່ວນເພື່ອມາປະກອບຢູ່ໃນໂຮງງານ ຕ້ອງມີເອກະສານ ແລະ ເງື່ອນໄຂທີ່ຈຳເປັນ ດັ່ງນີ້:

1). ສ້າງແຜນການຜະລິດປະຈຳປີຕາມແຈ້ງການຂອງກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 44/ອຫ, ລົງວັນທີ 7/2/2000 ວ່າດ້ວຍການນຳໃຊ້ຕາຕະລາງ ອ1 ຫາ ອ11 ແລະ ຜ່ານການກວດກາ ຢັ້ງຢືນ ຮັບຮອງ ຈາກພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະເຂດພິເສດ ແລ້ວສົ່ງມາຍັງກະຊວງອຸດສາຫະກຳ ແລະ ຫັດຖະກຳ (ກົມອຸດສາຫະກຳ) ກ່ອນວັນທີ 30/9 ຂອງທຸກໆປີ, ພ້ອມທັງສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການສົກປີຜ່ານມາ.

2). ມີຕົວເລກອະນຸມັດ ທີ່ຖືກຈັດສັນໃຫ້ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໃນແຈ້ງການສະບັບນີ້.

3). ປະກອບເອກະສານຂໍສະເໜີນຳເຂົ້າເປັນແຕ່ລະກໍລະນີ ແລ້ວຍື່ນຕໍ່ກະຊວງອຸດສາຫະກຳ ແລະຫັດຖະກຳ (ກົມອຸດສາຫະກຳ) ໂດຍຜ່ານພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດໄຊສົມບູນ. ບັນດາເອກະສານຂັດຕິດມາພ້ອມມີຄື:

1- ໃບສັ່ງຊື້ສິນຄ້າ, ຕ້ອງແຈ້ງປະເພດລົດ, ຈຳນວນ ແລະ ມູນຄ່າ ໂດຍລະບຸລາຍການສິ້ນສ່ວນລະອຽດຕາມຮູບແບບທີ່ຈະນຳເຂົ້າມາປະກອບ (SKD, CKD, IKD).
2- ໃບສະເໜີລາຄາສິນຄ້າ,ຕ້ອງແຈ້ງປະເພດລົດ, ຈຳນວນ ແລະ ມູນຄ່າ ໂດຍໃຫ້ລະບຸລາຍການສິ້ນສ່ວນລະອຽດຕາມຮູບແບບທີ່ຈະສົ່ງໃຫ້ມາປະກອບ (SKD, CKD, IKD).
3- ໃບຢັ້ງຢືນດ້ານຖານະການເງິນ (ເງິນຕາ) ຈາກທະນາຄານ;
4- ໃບທະບຽນວິສາຫະກິດ;
5- ໃບທະບຽນອາກອນ (ຢູ່ໃນກຳນົດທີ່ໃຊ້ໄດ້);
6- ໃບອະນຸຍາດດຳເນີນກິດຈະການໂຮງງານ (ຢູ່ໃນກຳນົດທີ່ໃຊ້ໄດ້);
7- ໃບສະຫຼຸບການນຳເຂົ້າສິ້ນສ່ວນ, ຜະລິດຕະພັນລົດຂາຍຕົວຈິງ ແລະ ຜະລິດຕະພັນລົດຄ້າງສາງຄັ້ງທີ່ຜ່ານມາ ໂດຍໄດ້ຮັບການຢັ້ງຢືນຈາກໜ່ວຍງານ ບ.ປ.ດ ແລະ ຂັດຕິດໃບແຈ້ງເສຍພາສີຂາເຂົ້າ (ບໍ 40).

5/. ສິ້ນສ່ວນລົດທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ຕ້ອງເອົາເຂົ້າປະກອບຢູ່ໃນໂຮງງານ ໂດຍຜ່ານຂັ້ນຕອນ ແລະ ຕ້ອງໄດ້ການປະກອບ, ຜ່ານລະບົບກວດກາເຕັກນິກ ແລະ ຄຸນນະພາບລົດຢູ່ພາຍໃນໂຮງງານ.

6/. ປະຕິບັດຕາມແຈ້ງການເລກທີ 062/ອຫ, 152/ອຫ ພາຍຫຼັງທີ່ສິ້ນສ່ວນເຂົ້າຮອດໂຮງງານ, ໂຮງງານຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ລົງກວດກາເບິ່ງສິ້ນສ່ວນ ກ່ອນ ຈຶ່ງສາມາດປະກອບໄດ້. ເມື່ອໄດ້ປະກອບເປັນລົດສຳເລັດຮູບແລ້ວ ຂະແໜງອຸດສາຫະກຳ ຈະລົງກວດກາອີກເທື່ອນຶ່ງ ເພື່ອຢັ້ງຢືນດ້ານມາດຕະຖານ ແລະ ຄຸນນະພາບລົດ ກ່ອນທີ່ຈະໄປສະເໜີຂໍຂຶ້ນທະບຽນນຳຂະແໜງ ຄ.ຂ.ປ.ກ.

7/. ໃຫ້ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ສະຫຼຸບລາຍງານຜົນການຈັດຕັ້ງ ປະຕິບັດແຈ້ງການສະບັບນີ້ ແລະ ຜົນການເຄື່ອນໄຫວຂອງບັນດາໂຮງງານປະກອບລົດ ຕໍ່ກະຊວງອຸດສາ ຫະກຳ ແລະ ຫັດຖະກຳ (ກົມອຸດສາຫະກຳ) ຊາບເປັນປະຈຳ ງວດ 3 ເດືອນ, 6 ເດືອນ ແລະ 1 ປີ. ຖ້າ ຫາກມີບັນຫາອື່ນໆ ຕໍ່ການເຄື່ອນໄຫວດັ່ງກ່າວກໍ່ໃຫ້ລາຍງານເປັນອັນສະເພາະຕື່ມ, ເພື່ອເປັນບ່ອນອີງໃນການດັດແກ້ຄືນແຜນການຈັດສັນຕົວເລກເປັນແຕ່ລະໄລຍະ.

8/. ໃນການນຳເຂົ້າສິ້ນສ່ວນຂອງບັນດາໂຮງງານປະກອບລົດແມ່ນຕິດພັນກັບແຜນວຸ່ນດ່ຽງຕົວເລກການນຳເຂົ້າຂອງລັດຖະບານ. ດັ່ງນັ້ນ, ຈຶ່ງໄດ້ກຳນົດເງື່ອນໄຂການຈັດສັນຕົວເລກເງິນຕາ ແລະ ໃຫ້ຄະແນນຕາມມາດຖານຂອງໂຮງງານປະກອບ ຄືດັ່ງນີ້ :

1). <u>ເງື່ອນໄຂທີ 1:</u> ອາຄານຜະລິດຂອງໂຮງງານ ລວມມີ 10 ຄະແນນ ໃນນີ້:

- 1- ສະຖານທີ່ເໝາະສົມ 2 ຄະແນນ.
- 2- ມີຄວາມແໜ້ນໜາ ແຂງແຮງ 1 --"--
- 3- ບໍ່ແອອັດ, ມີຄວາມເປັນລະບຽບຮຽບຮ້ອຍດີ 1 --"--
- 4- ຈັດໃຫ້ມີສາງອາໄຫຼ່ ແລະ ສາງຜະລິດຕະພັນ 1 --"--
- 5- ມີເຄື່ອງມືປ້ອງກັນອັກຄີໄພ 2 --"--
- 6- ມີວິທີການກຳຈັດສິ່ງເສດເຫຼືອ 3 --"--

2). <u>ເງື່ອນໄຂທີ 2:</u> ລະບົບຂັ້ນຕອນການປະກອບ ລວມມີ 20 ຄະແນນ ໃນນີ້:

- 1- ມີ ຮູບແບບຂັ້ນຕອນການປະກອບ :
  - ➢ ຮູບແບບ SKD 1 ຄະແນນ
  - ➢ ຮູບແບບ CKD 3 --"--
  - ➢ ຮູບແບບ IKD 5 --"--
- 2- ມີເຄື່ອງມືອຸປະກອນທັນສະໄໝ, ນຳໃຊ້ກະແຈດວັຍລົມ 3 --"--
- 3- ມີເຄື່ອງຍົກຍໍ ຫຼືສິ່ງຄ້ຽນ ເພື່ອທຸ່ນແຮງ 2 --"--
- 4- ນຳໃຊ້ລະບົບການຈອດດ້ວຍໄຟຟ້າ, ລົກຊີ 2 --"--
- 5- ມີຫ້ອງພົ່ນສີ ແລະ ອົບສີ ທີ່ບໍ່ກະທົບຕໍ່ສິ່ງແວດລ້ອມ 4 --"--

3). <u>ເງື່ອນໄຂທີ 3:</u> ອຸປະກອນກວດກາຄຸນນະພາບລົດ ລວມມີ 20 ຄະແນນ ໃນນີ້:

- 1- ມີເຄື່ອງຕັ້ງສູນລໍ້, ຖ່ວງລໍ້ 4 ຄະແນນ
- 2- ມີເຄື່ອງກວດກາລະບົບຫ້າມລໍ້ 4 --"--
- 3- ມີເຄື່ອງວັດແທກລະບົບຄວາມໄວ, ລະບົບບັງຊາ 4 --"--
- 4- ມີເຄື່ອງກວດກາລະບົບໄຟ, ແສງສະຫວ່າງ... 4 --"--
- 5- ມີເຄື່ອງກວດກາລະບົບທີ່ວຈັກ, ລະບົບສິ່ງກຳລັງ 4 --"--

4). <u>ເງື່ອນໄຂທີ 4:</u> ຂະໜາດຂອງໂຮງງານ ລວມມີ 15 ຄະແນນ ໃນນີ້:

- 1- ມີວິຊາການເຕັກນິກຂັ້ນສູງ(ກົນຈັກໃດນຶ່ງ) 5 ຄະແນນ.
- 2- ຄົນງານທີ່ຊຳນານງານ ມີ 1- 5 ຄະແນນ, ໝາຍວ່າ:
  - ➢ ຕ່ຳກວ່າ 10 ຄົນລົງມາ ໄດ້ 1 ຄະແນນ
  - ➢ ແຕ່ 11 ຫາ 20 ຄົນ ໄດ້ 2 --"--
  - ➢ ແຕ່ 21 ຫາ 30 ຄົນ ໄດ້ 3 --"--
  - ➢ ແຕ່ 31 ຫາ 50 ຄົນ ໄດ້ 4 --"--
  - ➢ ແຕ່ 51 ຄົນ ຂຶ້ນໄປ ໄດ້ 5 --"--
- 3- ທຶນຈົດທະບຽນ ມີ 1 - 5 ຄະແນນ ໝາຍວ່າ:
  - ➢ ມີທຶນຕ່ຳກວ່າ 200.000 $ ລົງມາ ໄດ້ 1 ຄະແນນ
  - ➢ ມີທຶນແຕ່ 200.001 ຫາ 500.000 $ ໄດ້ 2 --"--

- ມີທຶນແຕ່ 500.001 ຫາ 800.000 $ ໄດ້ 3 --"--
- ມີທຶນແຕ່ 800.001 ຫາ 1.000.000 $ ໄດ້ 4 --"--
- ມີທຶນແຕ່ 1.000.000 $ ຂຶ້ນໄປ ໄດ້ 5 --"--

5). ເງື່ອນໄຂທີ 5: ລະບົບປ້ອງກັນຄວາມປອດໄພ ແລະ ສຸຂາອະນາໄມ (ຕາມມາດຕາ 36 ຂອງຂໍ້ຕົກລົງວ່າດ້ວຍໂຮງງານ ເລກທີ 103/ອຫ) ລວມມີ 10 ຄະແນນ ໃນນີ້:

1- ໃຊ້ເຄື່ອງປ້ອງກັນ ຝຸ່ນ, ສຽງ, ແສງ (ແຜ່ປິດປາກ, ແວ່ນກັນແສງ...) 5 ຄະແນນ

2- ໃຊ້ເຄື່ອງປ້ອງກັນກະທົບຈາກເຄື່ອງຈັກ ເຊັ່ນ: ເກີບ, ໝວກ, ຖົງມື... 3 --"--

3- ເຄື່ອງມືປະຖົມພະຍາບານ, ຫ້ອງນ້ຳ, ຫ້ອງທຳຄວາມສະອາດຮ່າງກາຍ, ຊຸດເຄື່ອງນຸ່ງເວລາເຮັດວຽກທີ່ເປັນສັນຍາລັກຂອງໂຮງງານ... 2 --"--

6). ເງື່ອນໄຂທີ 6: ໃບຢັ້ງຢືນ ຫຼືໃບມອບລິຂະສິດ (ສຳລັບລົດໃໝ່ 100% ) ລວມມີ 5 ຄະແນນ.

7). ເງື່ອນໄຂທີ 7: ການປະຕິບັດແຜນອະນຸມັດສົກປີຜ່ານມາ ລວມມີ 10 ຄະແນນ.

8). ເງື່ອນໄຂທີ 8: ການປະຕິບັດພັນທະ ພາສີ-ອາກອນ ແລະ ອື່ນໆ ລວມມີ 5 ຄະແນນ.

9). ເງື່ອນໄຂທີ 9: ແຜນຂະຫຍາຍລະບົບຂັ້ນຕອນການປະກອບ ຕາມຮູບແບບ SKD, CKD, IKD ແລະ ມີແຜນປັບປຸງໂຮງງານ ລວມມີ 10 ຄະແນນ

10). ເງື່ອນໄຂທີ 10: ຫ້ອງຂາຍ(ໂຊຣູມ) ແລະສະຖານທີ່ບໍລິການຫຼັງຂາຍ ລວມມີ 10 ຄະແນນ.

- ຄະແນນລວມຂອງໂຮງງານ: ໂດຍໄດ້ຈາກຜົນບວກຂອງແຕ່ລະເງື່ອນໄຂ.
- ກຳນົດຕົວຄູນ (ດັດສະນີ): ເອົາຄະແນນລວມຂອງໂຮງງານທີ່ໄດ້ຮັບ ຫານໃຫ້ຄະແນນລວມທີ່ກຳນົດໄວ້ສູງສຸດ.
- ຕົວເລກເມັດເງິນທີ່ໂຮງງານໄດ້ຮັບ: ຕົວເລກທີ່ຖືກຈັດສັນ ຄູນໃຫ້ດັດສະນີຂອງແຕ່ລະໂຮງງານ ແລ້ວ ຫານໃຫ້ຜົນບວກດັດສະນີລວມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນ ແລະ ເຂດພິເສດໄຊສົມບູນ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ຫັດຖະກຳ

ສົມບູນ ຣາຊາສົມບັດ

- ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກ (ເພື່ອລາຍງານ)
- ກະຊວງການຄ້າ (ເພື່ອຊາບ).
- ກະຊວງ ຄ.ຂ ປ.ກ (ເພື່ອຊາບ).
- ກະຊວງການເງິນ (ເພື່ອຊາບ).
- ກົມອຸດສາຫະກຳ (ເພື່ອຕິດຕາມ ແລະ ຈັດຕັ້ງປະຕິບັດ).
- ພະແນກອຸດສາຫະກຳ ແລະຫັດຖະກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດໄຊສົມບູນ (ເພື່ອຈັດຕັ້ງປະຕິບັດ).